**ໜ້າປົກແຜນພັບຂໍ້ທີ VI**

ຂໍ້ມູນຂໍ້ທີ VI

ປົກປ້ອງສິດຂອງທ່ານ

**ດ້ານໃນແຜນພັບຂໍ້ທີ VI**

**ຂໍ້ທີ VI ແມ່ນຫຍັງ?**
ຂໍ້ທີ VI ຂອງກົດໝາຍສິດທິພົນລະເມືອງປີ 1964 ແມ່ນລັດຖະບັນຍັດຂອງລັດຖະບານກາງປະກາດວ່າ ບໍ່ໃຫ້ຜູ້ໃດຖືກຈໍາແນກຄວາມແຕກຕ່າງ ຫຼືຖືກປະຕິເສດຜົນປະໂຫຍດບົນພື້ນຖານເຊື້ອຊາດ, ສີຜິວ, ຫຼືຊາດກໍາເນີດ, ຢູ່ໃນໂຄງການ ແລະການບໍລິການທີ່ໄດ້ຮັບການຊ່ວຍເຫຼືອທາງດ້ານການເງິນຂອງລັດຖະບານກາງ. ເພື່ອຮັບປະກັນໃຫ້ລູກຄ້າອົງການຂົນສົ່ງສາທາລະນະເກາະຣອດ (RIPTA) ບໍ່ຖືກຈໍາແນກຄວາມແຕກຕ່າງ, ພວກເຮົາໄດ້ຮັບເອົານະໂຍບາຍທີ່ສົ່ງເສີມການເຂົ້າເຖິງເທົ່າທຽມກັນ ແລະການບໍລິການຄຸນນະພາບໃຫ້ກັບລູກຄ້າຂອງພວກເຮົາທັງໝົດ.

**ຂໍ້ທີ VI ມີຄວາມໝາຍແນວໃດກັບທ່ານ?**
ໃນທີ່ນີ້ RIPTA ອອກແຈ້ງການທົ່ວໄປໃນເລື່ອງນະໂຍບາຍຂອງຕົນເອງ ເພື່ອສະໜັບສະໜູນ ແລະຮັບປະກັນການປະຕິບັດຕາມຂໍ້ທີ VI ຂອງກົດໝາຍສິດທິພົນລະເມືອງປີ 1964 ເຕັມທີ່, ກົດຫມາຍການເອົາສິດທິພົນລະເມືອງຄືນປີ 1987, ແລະລັດຖະບັນຍັດທີ່ກ່ຽວຂ້ອງ ແລະກົດລະບຽບຢູ່ໃນທຸກໂຄງການ ແລະກິດຈະກໍາ.

ອົງການຂົນສົ່ງສາທາລະນະ, ເຊັ່ນ RIPTA ຈໍາເປັນຕ້ອງໄດ້ໃຫ້ການບໍລິການໃນຮູບແບບທີ່ຍຸຕິທໍາ ແລະເທົ່າທຽມກັນກັບຜູ້ໂດຍສານທຸກຄົນໂດຍບໍ່ມີການຄໍານຶງເລື່ອງເຊື້ອຊາດ, ສີຜິວ, ຫຼືຊາດກໍາເນີດຂອງເຂົາເຈົ້າ.  ຂໍ້ທີ VI ຍັງຮຽກຮ້ອງໃຫ້ RIPTA ຫຼຸດຜ່ອນອຸປະສັກທາງດ້ານພາສາ ທີ່ອາດຈະຂັດຂວາງການເຂົ້າເຖິງການບໍລິການທີ່ສໍາຄັນຂອງລູກຄ້າ ຜູ້ທີ່ອາດຈະບໍ່ມີຄວາມຄ່ອງແຄ້ວທາງດ້ານພາສາອັງກິດ.

RIPTA ຍັງມີນະໂຍບາຍບໍ່ອົດກັ້ນຫ້າມການຈໍາແນກທີ່ຜິດກົດໝາຍທຸກຮູບແບບ.

**ມີການບໍລິການໃດແກ່ໃຫ້ກັບລູກຄ້າຜູ້ທີ່ບໍ່ເກັ່ງພາສາອັງກິດ?**
ພາຍໃຕ້ຂໍ້ທີ VI, ລູກຄ້າຜູ້ທີ່ບໍ່ເກັ່ງພາສາອັງກິດມີສິດໄດ້ຮັບການຊ່ວຍເຫຼືອ ເພື່ອຊ່ວຍໃຫ້ເຂົາເຈົ້າເຂົ້າເຖິງຂໍ້ມູນ RIPTA ທີ່ສໍາຄັນ. ຖ້າຈໍາເປັນຕ້ອງມີການຊ່ວຍເຫຼືອການແປພາສາ ພວກເຮົາສາມາດຕິດຕໍ່ Voiance, ເຊິ່ງສາມາດໃຫ້ການບໍລິການແປພາສາທາງໂທລະສັບເປັນຫຼາຍພາສາ, ລວມທັງພາສາສະເປນ, ປ໊ອກຕຸຍການ, ຈີນ, ຣັດເຊຍ, ແລະອື່ນໆອີກ.

ນອກຈາກນັ້ນ, ຕົວແທນບໍລິການ RIPTA ແລະຫົວໜ້າຜູ້ຂີ່ນໍາຍັງສາມາດໃຫ້ຄໍາແນະນໍາແກ່ລູກຄ້າ ຜູ້ທີ່ບໍ່ເກັ່ງພາສາອັງກິດນໍາ.

**ທ່ານຄວນຈະເຮັດແນວໃດ ຖ້າທ່ານມີຄໍາຮ້ອງຮຽນ?**
ຄົນໃດກໍ່ຕາມຜູ້ທີ່ເຊື່ອວ່າ ເຂົາເຈົ້າໄດ້ຮັບຄວາມທຸກຈາກການປະຕິບັດເປັນການຈໍາແນກຄວາມແຕກຕ່າງຜິດກົດໝາຍພາຍໃຕ້ຂໍ້ທີ VI ມີສິດຍື່ນຄໍາຮ້ອງທຸກກັບ RIPTA.  ເມື່ອສົ່ງຄໍາຮ້ອງທຸກ, ກະລຸນາບອກຂໍ້ມູນຕິດຕໍ່ຂອງທ່ານ ພ້ອມທັງລາຍລະອຽດຂອງເຫດການລວມທັງສິ່ງເກີດຂຶ້ນ, ຢູ່ໃນ ແລະເມື່ອໃດ, ແລະຊື່, ທີ່ຢູ່, ເບີໂທລະສັບ, ແລະທີ່ຢູ່ອີເມວຂອງພະຍານ.

**ທ່ານອາດຈະ:**

- **ສົ່ງໜັງສືຫາ**:
  Civil Rights Officer (ເຈົ້າໜ້າທີ່ສິດທິຂອງພົນລະເມືອງ)
  Rhode Island Public Transit Authority (ອົງການຂົນສົ່ງສາທາລະນະເກາະຣອດ)
  705 Elmwood Avenue
  Providence, RI 02907

- **ໂທຫາຝ່າຍບໍລິການລູກຄ້າທີ່ເບີ** (401) 781-9400.
  ການບໍລິການຊ່ວຍເຫຼືອລູກຄ້າ RIPTA ເປີດບໍລິການ
  ວັນຈັນ-ວັນສຸກ 7:00 ໂມງເຊົ້າ-7:00 ໂມງແລງ
  ແລະວັນເສົາຈາກ 8:00 ໂມງເຊົ້າ-6:00 ໂມງແລງ.

- **ໄປທີ່ RIPTA.com** ແລະດາວໂຫຼດສຳເນົາຂອງ
  ແບບຟອມຂໍ້ທີ VI ເພື່ອປະກອບໃຫ້ຄົບຖ້ວນ ແລະ
  ສົ່ງທາງໄປສະນີຕາມທີ່ຢູ່ຂ້າງເທິງ.

**<u>ຫຼັງປົກແຜນພັບຂໍ້ທີ VI</u>**

**RIPTA ຍິນດີຮັບເອົາຄຳຄິດເຫັນຂອງທ່ານ!**
RIPTA ໃຫ້ຄຳໝັ້ນສັນຍາທີ່ຈະໃຫ້ການບໍລິການຂົນສົ່ງທີ່ປອດໄພ, ມີປະສິດທິພາບ ແລະຄຸນນະພາບແກ່ທຸກຊຸມຊົນທີ່ພວກເຮົາບໍລິການ.

ຖ້າທ່ານມີຄຳແນະນຳໃດໜຶ່ງກ່ຽວກັບວ່າ ພວກເຮົາສາມາດປັບປຸງຄຳໝັ້ນສັນຍາຂອງພວກເຮົາຕໍ່ການບໍ່ຈຳແນກຄວາມແຕກຕ່າງໄດ້ແນວໃດ, ຫຼືພວກເຮົາສາມາດບໍລິການຄວາມຕ້ອງການຂອງລູກຄ້າຜູ້ທີ່ບໍ່ເກັ່ງພາສາອັງກິດໄດ້ແນວໃດນັ້ນ, ພວກເຮົາຢາກຈະໄດ້ຍິນຈາກທ່ານ.